ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ

ເລກທີ 5788 /ຕປທ.ຈສກ.3.9

ນະຄອນຫຼວງວຽງຈັນ, ວັນທີ 01 ສິງຫາ 2016

# ໃບແຈ້ງການ

**ຮຽນ:** - ທ່ານ ຄະນະກຳມະການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຂັ້ນສູນກາງ,
- ທ່ານ ຄະນະກຳມະການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຂັ້ນທ້ອງຖິ່ນ.

**ເລື່ອງ:** ແຈ້ງການແນະນຳກ່ຽວກັບຂັ້ນຕອນການອະນຸມັດໂຄງການ ນັບແຕ່ຂັ້ນທ້ອງຖິ່ນຈົນເຖິງຂັ້ນສູນກາງ.

- ອີງຕາມຜົນຂອງກອງປະຊຸມປຶກສາຫາລືປະຈຳໄຕມາດແບບບໍ່ເປັນທາງການລະຫວ່າງຜູ້ຕາງໜ້າ ບັນດາກະຊວງຂະແໜງການພາກລັດ ກັບ ອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານ (ອສບລ) ໃນວັນທີ 30 ມິຖຸນາ 2016.

ກະຊວງການຕ່າງປະເທດ ໃນນາມປະທານຄະນະກຳມະການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຂັ້ນສູນກາງ, ຂໍຖືເປັນກຽດແຈ້ງມາຍັງບັນດາກະຊວງຂະແໜງການອ້ອມຂ້າງສູນກາງ, ບັນດາແຂວງ ແລະ ເມືອງ ໃນຂອບເຂດທົ່ວປະເທດຊາບວ່າ ເພື່ອເປັນເອກະພາບກັນໃນຂອບເຂດທົ່ວປະເທດ ກ່ຽວກັບການອະນຸມັດຮັບເອົາໂຄງການຂອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານທີ່ໄດ້ຮັບການອະນຸຍາດໃຫ້ປະຕິບັດງານຢູ່ ສປປ ລາວ, ກະຊວງການຕ່າງປະເທດ ສະເໜີໃຫ້ບັນດາກະຊວງ, ແຂວງ, ເມືອງ ປະຕິບັດຂັ້ນຕອນການດຳເນີນເອກະສານ ແລະ ກຳນົດເວລາ ຂອງການອະນຸມັດໂຄງການດັ່ງກ່າວ ດັ່ງລຸ່ມນີ້:

1. **ຂັ້ນຕອນທີ I:**

ການເກັບກຳຂໍ້ມູນ ແມ່ນຈະບໍ່ມີການກຳນົດເວລາ, ຈະໄວຫຼືຊ້າຂຶ້ນກັບການປະສານງານ ແລະ ເຮັດວຽກຮ່ວມກັນ ລະຫວ່າງອົງການ INGOs ແລະ ຄູ່ຮ່ວມງານທີ່ກ່ຽວຂ້ອງ, ລວມທັງການຮ່າງ MOU ເບື້ອງຕົ້ນ.

2. **ຂັ້ນຕອນທີ II:**

– ຜ່ານຮ່າງ MOU ເບື້ອງຕົ້ນ ແມ່ນໃຫ້ຖືເອົາມື້ຈັດກອງປະຊຸມ ຜ່ານຮ່າງ MOU ເບື້ອງຕົ້ນ ຢູ່ຂັ້ນທ້ອງຖິ່ນ ເປັນມື້ທຳອິດ ໃນຂະບວນການພິຈາລະນາ ອະນຸມັດໂຄງການ ໂດຍຜູ້ເຂົ້າຮ່ວມກອງປະຊຸມ ປະກອບດ້ວຍ:

1) ພະແນກຕ່າງປະເທດແຂວງ;
2) ພະແນກການຕ່າງໆທີ່ກ່ຽວຂ້ອງພາຍໃນແຂວງ;
3) ຫ້ອງການຕ່າງໆທີ່ກ່ຽວຂ້ອງພາຍໃນເມືອງ;
4) ອົງການ INGOs.

– ຈາກນັ້ນ ອົງການ NGO ແລະ ທ້ອງຖິ່ນມີເວລາຝ່າຍລະ 15 ວັນລັດຖະການ, ໃນການປັບປຸງຮ່າງ MOU ເບື້ອງຕົ້ນຄືນ ຕາມຄຳເຫັນຂອງທີ່ປະຊຸມ.

- ພາຍຫຼັງທີ່ໄດ້ຮັບການປັບປຸງ ຂອງຝ່າຍກ່ຽວຂ້ອງ ແລະ ເປັນເອກະພາບກັນແລ້ວ ຂັ້ນເມືອງເຮັດໜັງສືສະເໜີຫາຂັ້ນແຂວງ ເພື່ອຂໍຮັບເອົາໂຄງການ.
- ຂັ້ນແຂວງ ພະແນກກ່ຽວຂ້ອງຕ້ອງສົມທົບກັບພະແນກການຕ່າງປະເທດກວດກາເບິ່ງຮ່າງ MOU ເບື້ອງຕົ້ນຄືນແລ້ວນຳສະເໜີຫາ ທ່ານຮອງເຈົ້າແຂວງຜູ້ຊີ້ນຳວຽກງານຄຸ້ມຄອງອົງການ NGO ພາຍໃນ 15 ວັນລັດຖະການ ເພື່ອພິຈາລະນາ ແລະ ເຊັນ ສົ່ງໃຫ້ກະຊວງກ່ຽວຂ້ອງຢູ່ສູນກາງພິຈາລະນາຕໍ່ໄປ.

3. **ຂັ້ນຕອນທີ III:**

- ກະຊວງກ່ຽວຂ້ອງຕ້ອງສົມທົບອົງການ NGO ເປີດກອງປະຊຸມຜ່ານຮ່າງ MOU ເບື້ອງຕົ້ນທີ່ໄດ້ຮັບຈາກແຂວງ ພາຍໃນ 15 ວັນລັດຖະການ, ໂດຍການເຂົ້າຮ່ວມຂອງ:
    1) ກະຊວງການຕ່າງປະເທດ;
    2) ບັນດາກົມກ່ຽວຂ້ອງພາຍໃນກະຊວງດັ່ງກ່າວ;
    3) ອົງການ NGO.
- ຈາກນັ້ນ, ທັງອົງການ NGO ແລະ ກະຊວງກ່ຽວຂ້ອງມີເວລາ ຝ່າຍລະ 15 ວັນລັດຖະການ ໃນການປັບປຸງຮ່າງ MOU ເບື້ອງຕົ້ນຄືນ ຕາມຄຳເຫັນຂອງກອງປະຊຸມ.
- ກະຊວງກ່ຽວຂ້ອງເຮັດໜັງສືຫາກະຊວງການຕ່າງປະເທດເພື່ອຂໍອະນຸມັດຮັບເອົາໂຄງການຊ່ວຍເຫຼືອດັ່ງກ່າວ.

4. **ຂັ້ນຕອນທີ IV:**

- ການອະນຸມັດໂຄງການ: ກະຊວງການຕ່າງປະເທດເມື່ອໄດ້ຮັບໜັງສືສະເໜີຂໍອະນຸມັດຮັບເອົາໂຄງການຈາກກະຊວງກ່ຽວຂ້ອງຄົບຖ້ວນແລ້ວ ຕ້ອງດຳເນີນການຄົ້ນຄວ້າ ນຳສະເໜີຂັ້ນເທິງ ເພື່ອອອກຂໍ້ຕົກລົງອະນຸມັດຮັບເອົາໂຄງການ ຢ່າງຊ້າສຸດບໍ່ໃຫ້ເກີນ 10-15 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ປະຕິບັດຕາມເນື້ອໃນຈົດໃຈດັ່ງກ່າວ ຕາມທາງຄວນດ້ວຍ.

ລັດຖະມົນຕີ

ກະຊວງການຕ່າງປະເທດ ລັດຖະມົນຕີ

**ສະເຫລີມໄຊ ກົມມະສິດ**

<u>ສຳເນົາສົ່ງ:</u>

- ຄະນະກຳມະການຄຸ້ມຄອງອົງການຈັດຕັ້ງສາກົນທີ່ບໍ່ສັງກັດລັດຖະບານຂັ້ນສູນກາງ, ບ່ອນລະ 01 ສະບັບ
- ຫ້ອງວ່າການປົກຄອງແຂວງ, 18 ແຂວງ ທົ່ວປະເທດ, ບ່ອນລະ 01 ສະບັບ
- ພະແນກການຕ່າງປະເທດແຂວງ, 18 ແຂວງ ທົ່ວປະເທດ, ບ່ອນລະ 01 ສະບັບ
- ຫ້ອງການປົກຄອງເມືອງ ຂອງ 18 ແຂວງ ທົ່ວປະເທດ, ບ່ອນລະ 01 ສະບັບ